ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ...0786........./ຫກ

ນະຄອນຫຼວງວຽງຈັນ, ວັນທີ...19..... ມີນາ 2026

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ;

- ບັນດາຜູ້ປະກອບການຜູ້ລ້ຽງໝູ ແລະ ນາຍຮ້ອຍ ໃນຂອບເຂດທົ່ວປະເທດ.

ເລື່ອງ: ຫ້າມຊື້-ຂາຍ ໝູຊີ້ນ (ໝູເປັນໜ້າຟາມ) ຕ່ຳກວ່າຕົ້ນທຶນການລ້ຽງ.

- ອີງຕາມ ດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ສະບັບເລກທີ 474/ນຍ, ລົງວັນທີ 18 ພະຈິກ 2010;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1990/ອຄ, ລົງວັນທີ 09 ກັນຍາ 2025;
- ອີງຕາມ ແຈ້ງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1757/ອຄ, ລົງວັນທີ 17 ກັນຍາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບ ລົງເກັບກຳຂໍ້ມູນ ກ່ຽວກັບສະພາບການລ້ຽງໝູ, ການເໜັງຕີງ ຂອງລາຄາໝູໜ້າຟາມ ຢູ່ນະຄອນຫຼວງວຽງຈັນ ສະບັບເລກທີ 0394/ກສ, ລົງວັນທີ 02 ກຸມພາ 2026.

ເພື່ອເປັນການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເນື້ອໃນ ມາດຕາ 6 ຂອງດຳລັດ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ກ່ຽວກັບ ການປະຕິບັດບັນດາມາດຕະການຄວບຄຸມລາຄາ ແລະ ໂດຍສະເພາະແມ່ນ ມາດຕະການກຳນົດລາຄາສູງສຸດ, ລາຄາຕ່ຳສຸດ ຫຼື ຂອບເຂດລາຄາ ເພື່ອຮັກສາສະຖຽນລະພາບທາງດ້ານລາຄາຂອງຊີ້ນໝູ ໃນທ້ອງຕະຫຼາດ ທັງເປັນການປົກປ້ອງ ແລະ ຊຸກຍູ້ສົ່ງເສີມຜູ້ປະກອບການຜະລິດ/ລ້ຽງໝູຊີ້ນ ໃຫ້ມີຄວາມໝັ້ນຄົງ, ຮັບປະກັນການສະໜອງຊີ້ນໝູ ໃຫ້ແກ່ຕະຫຼາດກໍຄືສັງຄົມຢ່າງພຽງພໍ ແລະ ລາຄາເໝາະສົມ ຕາມກົນໄກຕະຫຼາດ ໃນແຕ່ລະໄລຍະ ໂດຍຜ່ານການປະສານສົມທົບກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ, ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ ເພື່ອຈັດຕັ້ງປະຕິບັດ ດັ່ງນີ້:

1. ຫ້າມຜູ້ປະກອບການລ້ຽງໝູ ແລະ ນາຍຮ້ອຍ ຊື້-ຂາຍ ຕ່ຳ ຫຼື ສູງກວ່າ ໂຄງປະກອບລາຄາຕົ້ນທຶນການຜະລິດໝູຊີ້ນ ແລະ ຊາກໝູ ທີ່ຂະແໜງກະສິກຳ ແລະ ສິ່ງແວດລ້ອມ ຄິດໄລ່ ແລະ ຢັ້ງຢືນ ໃນແຕ່ລະເດືອນ.
2. ຫາກພົບເຫັນການລະເມີດ ຂໍ້ 1 ຂ້າງເທິງ ຫຼື ມີພຶດຕິກຳອື່ນ ເພື່ອສ້າງຄວາມປັ່ນປ່ວນ ກ່ຽວກັບ ລາຄາ ຫຼື ບິດເບືອນກົນໄກຕະຫຼາດ ເຮັດໃຫ້ເກີດຄວາມບໍ່ສະຫງົບໃນສັງຄົມ ຊຶ່ງສົ່ງຜົນກະທົບຕໍ່ລາຄາ ຈະຖືກປະຕິບັດມາດຕະການດັ່ງນີ້:

   2.1 ສຳລັບນາຍຮ້ອຍ:

   1. ລະເມີດຄັ້ງທີ ໜຶ່ງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 10% ຂອງມູນຄ່າການຊື້-ຂາຍ;
   2. ລະເມີດຄັ້ງທີ ສອງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 50% ຂອງມູນຄ່າການຊື້-ຂາຍ;
   3. ລະເມີດຄັ້ງທີ ສາມ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 100% ຂອງມູນຄ່າການຊື້-ຂາຍ, ພ້ອມທັງ ສະເໜີໂຈະ ເປັນເວລາ ຫົກເດືອນ ຫາ ໜຶ່ງປີ, ຢຸດ ຫຼື ຖອນໃບອະນຸຍາດຕ່າງໆ.

2.2 ສຳລັບຜູ້ປະກອບການຟາມລ້ຽງໝູຂະໜາດນ້ອຍ:

1. ລະເມີດຄັ້ງທີ ໜຶ່ງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 2,000,000 ກີບ;
2. ລະເມີດຄັ້ງທີ ສອງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 3,000,000 ກີບ;
3. ລະເມີດຄັ້ງທີ ສາມ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 5,000,000 ກີບ, ພ້ອມທັງ ສະເໜີໂຈະ ເປັນເວລາ ຫົກເດືອນ ຫາ ໜຶ່ງປີ, ຢຸດ ຫຼື ຖອນໃບອະນຸຍາດຕ່າງໆ.

2.3 ສຳລັບຜູ້ປະກອບການຟາມລ້ຽງໝູຂະໜາດໃຫຍ່:

1. ລະເມີດຄັ້ງທີ ໜຶ່ງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 5,000,000 ກີບ;
2. ລະເມີດຄັ້ງທີ ສອງ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 10,000,000 ກີບ;
3. ລະເມີດຄັ້ງທີ ສາມ: ຈະຖືກເຮັດບົດບັນທຶກ ແລະ ປັບໃໝ 20,000,000 ກີບ, ພ້ອມທັງ ສະເໜີໂຈະ ເປັນ ເວລາ ຫົກເດືອນ ຫາ ໜຶ່ງປີ, ຢຸດ ຫຼື ຖອນໃບອະນຸຍາດຕ່າງໆ.

3. ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ສົມທົບກັບ ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການ ດັ່ງນີ້:

3.1. ຍັງຍືນຕົ້ນທຶນການຜະລິດໝູຊີ້ນ ແລະ ລາຄາໝູ ໃຫ້ໄດ້ທຸກເດືອນ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້;

3.2. ເກັບກຳ ແລະ ຂຶ້ນທະບຽນນາຍຮ້ອຍ ເພື່ອຄຸ້ມຄອງ, ຕິດຕາມກວດກາ;

3.3. ເຜີຍແຜ່ແນະນຳ ຜູ້ປະກອບການລ້ຽງໝູ, ນາຍຮ້ອຍ ແລະ ລູກຂຽງ ໃຫ້ຮັບຮູ້ເຂົ້າໃຈ ຕໍ່ກົດໝາຍ ແລະ ລະບຽບການ ທີ່ລັດວາງອອກໃນແຕ່ລະໄລຍະ;

3.4. ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າ, ຫ້ອງການກະສິກຳ ແລະ ສິ່ງແວດລ້ອມເມືອງ, ນະຄອນ ລົງຕິດຕາມ ກວດກາ ການຊື້-ຂາຍໝູ ຢູ່ຕາມຟາມຕ່າງໆ ໃນຂອບເຂດຂອງຕົນ ຢ່າງເຂັ້ມງວດ;

3.5. ສະຫຼຸບລາຍງານສະພາບການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ໃຫ້ກົມການຄ້າພາຍໃນ ປະຈຳເດືອນ ຢ່າງເປັນປົກກະຕິ.

4. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີແຈ້ງການລົບລ້າງ ຫຼື ປ່ຽນແທນ.

**ຫົວໜ້າຫ້ອງການ**

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ປອ. ບົວວັນ ວິລະວົງ

**ບ່ອນສົ່ງ:**

1. ກົມລ້ຽງສັດ ແລະ ການປະມົງ, ກະຊວງກະສິກຳ ແລະ ສິ່ງແວດລ້ອມ 01 ສະບັບ;
2. ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ, ບ່ອນລະ 01 ສະບັບ;
3. ພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ, ນະຄອນຫລວງ, ບ່ອນລະ 01 ສະບັບ;
4. ເກັບມ້ຽນ 01 ສະບັບ.